ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1720 /ອຄ. ຄພນ

ນະຄອນຫຼວງວຽງຈັນ, ວັນທີ 09 ກັນຍາ 2011

# ແຈ້ງການ

ເຖິງ : - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ

ເລື່ອງ : ການໂຈະການດຳເນີນທຸລະກິດຊົ່ວຄາວ ຫລື ຖາວອນ ແລະ ການຖອນທະບຽນວິສາຫະກິດ

ເພື່ອໃຫ້ຄວາມເຂົ້າໃຈກ່ຽວກັບການໂຈະການດຳເນີນທຸລະກິດຊົ່ວຄາວ ຫລື ຖາວອນ ແລະ ການຖອນທະບຽນວິສາຫະກິດໄດ້ຮັບການປະຕິບັດຢ່າງເຂັ້ມງວດ ຖືກຕ້ອງ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້ :

1. ການຖອນທະບຽນວິສາຫະກິດ ແມ່ນການລຶບຊື່ວິສາຫະກິດ ທີ່ຖືກຍຸບເລີກອອກຈາກບັນຊີທະບຽນວິສາຫະກິດ ຕິດພັນກັບການລຶບຊື່ດັ່ງກ່າວ ເຈົ້າໜ້າທີ່ທະບຽນວິສາຫະກິດ ຕ້ອງ :
   - ອອກແຈ້ງການກ່ຽວກັບການລຶບຊື່ນັ້ນ ໃຫ້ມວນຊົນຊາບ ພາຍໃນກຳນົດ 10 ວັນລັດຖະການ ນັບແຕ່ວັນລຶບຊື່ເປັນຕົ້ນໄປ ;
   - ເອົາໃບທະບຽນວິສາຫະກິດ ຄືນ .

2. ການຖອນທະບຽນວິສາຫະກິດ ຈຶ່ງເປັນຂັ້ນຕອນສຸດທ້າຍ ໃນຂະບວນການຍຸບເລີກ ຫລື ການລົ້ມລະລາຍຂອງວິສາຫະກິດ ຊຶ່ງຈະປະຕິບັດໄດ້ ກໍຕໍ່ເມື່ອ :
   - ວິສາຫະກິດ ຫລື ຜູ້ຊຳລະສະສາງຂອງວິສາຫະກິດທີ່ຍຸບເລີກ ໄດ້ແຈ້ງຍຸບເລີກວິສາຫະກິດຢ່າງຖາວອນ ນຳເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງແລ້ວ (ກໍລະນີ ການຊຳລະສະສາງ ປະຕິບັດໂດຍບໍ່ຜ່ານການພິຈາລະນາຂອງສານ);
   - ຜູ້ຊຳລະສະສາງຂອງວິສາຫະກິດທີ່ຍຸບເລີກ ໄດ້ແຈ້ງຍຸບເລີກວິສາຫະກິດຢ່າງຖາວອນ ນຳເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ພາຍຫຼັງສານຕັດສິນໃຫ້ວິສາຫະກິດຍຸບເລີກຢ່າງຖາວອນແລ້ວ.

3. ການສັ່ງໂຈະການດຳເນີນທຸລະກິດຊົ່ວຄາວ ຫລື ຖາວອນນັ້ນ ໃຫ້ປະຕິບັດຕໍ່ກິດຈະການ ຫລື ປະເພດທຸລະກິດທີ່ມີການລະເມີດ ແລະ ໃນຂອບເຂດພື້ນທີ່ ທີ່ພາກສ່ວນເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງຮັບຜິດຊອບ ສ່ວນທີ່ເຫຼືອວິສາຫະກິດ ກໍຍັງສາມາດສືບຕໍ່ດຳເນີນທຸລະກິດໄປໄດ້ຕາມປົກກະຕິ.

4. ການສັ່ງໂຈະການດຳເນີນທຸລະກິດຊົ່ວຄາວ ແມ່ນມາດຕະການ ນຳໃຊ້ ເພື່ອໃຫ້ວິສາຫະກິດທີ່ລະເມີດລະບຽບກົດໝາຍ ບໍ່ຮ້າຍແຮງໄດ້ປັບປຸງ ແກ້ໄຂໃຫ້ຖືກຕ້ອງ ໃນນີ້ :

- ການສັ່ງໂຈະການດຳເນີນທຸລະກິດຊົ່ວຄາວ ແຕ່ລະຄັ້ງ ຕ້ອງມີບົດບັນທຶກ ໂດຍຕ້ອງລະບຸ : 1) ກິດຈະການ ຫລື ປະເພດທຸລະກິດທີ່ສັ່ງໂຈະ ; 2) ຂອບເຂດພື້ນທີ່ຫ້າມດຳເນີນທຸລະກິດຊົ່ວຄາວ ; 3) ກຳນົດເວລາ ແລະ ເງື່ອນໄຂໃນການປັບປຸງແກ້ໄຂ ແລະ 4) ມາດຕະການຂັ້ນຕໍ່ໄປ (ກໍລະນີບໍ່ສາມາດປະຕິບັດຕາມກຳນົດເວລາ ແລະ ເງື່ອນໄຂຂອງບົດບັນທຶກໄດ້) ;
- ໃນໄລຍະສັ່ງໂຈະຊົ່ວຄາວນີ້ ວິສາຫະກິດ ບໍ່ສາມາດເຄື່ອນໄຫວທຸລະກິດໃນສ່ວນກິດຈະການ ຫລື ປະເພດທຸລະກິດທີ່ຖືກສັ່ງໂຈະໄດ້.

5. ການສັ່ງໂຈະການດຳເນີນທຸລະກິດຖາວອນ ແມ່ນມາດຕະການ ທີ່ນຳໃຊ້ຕໍ່ : 1) ວິສາຫະກິດທີ່ຖືກສັ່ງໂຈະການດຳເນີນທຸລະກິດຊົ່ວຄາວ ແຕ່ບໍ່ສາມາດປະຕິບັດຕາມກຳນົດເວລາ ຫລື ເງື່ອນໄຂຂອງບົດບັນທຶກປັບປຸງ ແກ້ໄຂໄດ້ ຫລື 2) ວິສາຫະກິດທີ່ລະເມີດລະບຽບ ກົດໝາຍຢ່າງຮ້າຍແຮງ ສ້າງຄວາມເສຍຫາຍໜັກໜ່ວງແກ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບ ຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ, ສະພາບແວດລ້ອມ ຫລື ເສດຖະກິດ-ສັງຄົມ, ໝາຍວ່າ :

- ການສັ່ງໂຈະການດຳເນີນທຸລະກິດຖາວອນ ບໍ່ແມ່ນການສັ່ງຍຸບເລີກວິສາຫະກິດ (ວິສາຫະກິດທີ່ຖືກສັ່ງໂຈະຍັງມີຕົວຕົນ ແລະ ຫ້າມຍຶດໃບທະບຽນວິສາຫະກິດ) ເວັ້ນເສຍແຕ່ຜົນຂອງການສັ່ງໂຈະນັ້ນ ເຮັດໃຫ້ວິສາຫະກິດ ບໍ່ສາມາດດຳເນີນທຸລະກິດ ຕໍ່ໄດ້ ແລະ ຕ້ອງຍຸບເລີກຕາມເຫດຜົນ ແລະ ຂັ້ນຕອນຂອງກົດໝາຍ ;
- ກິດຈະການ ຫລື ປະເພດທຸລະກິດ ທີ່ຖືກສັ່ງໂຈະການດຳເນີນທຸລະກິດຖາວອນ ຈະບໍ່ສາມາດດຳເນີນທຸລະກິດໄດ້ອີກ ໃນຂອບເຂດພື້ນທີ່ ທີ່ພາກສ່ວນເຈົ້າໜ້າທີ່ທະບຽນວິສາຫະກິດ ໄດ້ກຳນົດໄວ້, ໃນກໍລະນີ ການລະເມີດຄອບຄຸມຂອບເຂດກວ້າງ ໃຫ້ພາກສ່ວນເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງຂອງຫຼາຍແຂວງ ຫລື ຫຼາຍເມືອງ ປະສານກັນອອກຄຳສັ່ງໂຈະຮ່ວມກັນກໍໄດ້ ;
- ການສັ່ງໂຈະດັ່ງກ່າວ ຕ້ອງອອກຄຳສັ່ງ ຫລື ແຈ້ງການເປັນລາຍລັກອັກສອນ ໂດຍລະບຸປະເພດທຸລະກິດທີ່ຫ້າມ ແລະ ຂອບເຂດພື້ນທີ່ ທີ່ຫ້າມດຳເນີນທຸລະກິດ.

6. ວິສາຫະກິດທີ່ຖືກສັ່ງໂຈະການດຳເນີນທຸລະກິດຖາວອນ ແຕ່ຢາກປະກອບທຸລະກິດ ໃນກິດຈະການ ຫລື ປະເພດທຸລະກິດນັ້ນ ຄືນໃໝ່ ໃຫ້ປະຕິບັດ ດັ່ງນີ້ :

- ໃນກໍລະນີຖືກໂຈະການດຳເນີນທຸລະກິດຖາວອນ ເນື່ອງຈາກບໍ່ສາມາດປະຕິບັດ ຕາມບົດບັນທຶກປັບປຸງ ແກ້ໄຂ ແມ່ນໃຫ້ວິສາຫະກິດທີ່ກ່ຽວຂ້ອງ ສະເໜີແຜນປັບປຸງ ແກ້ໄຂໃຫ້ຖືກຕ້ອງ ຜ່ານພາກສ່ວນເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ສັ່ງໂຈະ ເພື່ອຮັບຮອງ ແລະ ຕິດຕາມການປະຕິບັດເງື່ອນໄຂ ຖ້າປະຕິບັດໄດ້ຄົບຖ້ວນ ກໍໃຫ້ພາກສ່ວນເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ສັ່ງໂຈະນັ້ນ ພິຈາລະນາອອກຄຳສັ່ງ ຫລື ແຈ້ງການເປັນລາຍລັກອັກສອນ ລຶບລ້າງຄຳສັ່ງ ຫລື ແຈ້ງການໂຈະຄັ້ງກ່ອນ ແລະ ອະນຸຍາດໃຫ້ດຳເນີນທຸລະກິດຄືນໃໝ່ໃນຂອບເຂດພື້ນທີ່ຂອງຕົນໄດ້ ;
- ໃນກໍລະນີຖືກໂຈະການດຳເນີນທຸລະກິດຖາວອນ ເນື່ອງຈາກການລະເມີດລະບຽບ ກົດໝາຍຢ່າງຮ້າຍແຮງ ພາຍຫຼັງແກ້ໄຂ ຫລື ສິ້ນສຸດການດຳເນີນຄະດີຢ່າງຖືກຕ້ອງແລ້ວ ແມ່ນໃຫ້ວິສາຫະກິດທີ່ຖືກສັ່ງໂຈະ ສະເໜີຕໍ່ພາກສ່ວນເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງພິຈາລະນາ ຕາມລະບຽບກົດໝາຍ. ການພິຈາລະນາ ດັ່ງກ່າວນີ້ ຕ້ອງມີຄວາມຮອບຄອບ ກ່ອນຈະອະນຸຍາດຄືນໃໝ່ ແລະ ບໍ່ໃຫ້ອະນຸຍາດອີກ ສຳລັບການລະເມີດ ຄັ້ງທີສອງ.

7. ວິສາຫະກິດທີ່ຍັງເຄື່ອນໄຫວທຸລະກິດ ໃນກິດຈະການ ຫລື ປະເພດທຸລະກິດທີ່ຖືກສັ່ງໂຈະ(ຊົ່ວຄາວ ຫຼື ຖາວອນ) ໃນຂອບເຂດພື້ນທີ່ທີ່ຖືກຫ້າມນັ້ນ ຖືວ່າເປັນການເຄື່ອນໄຫວທຸລະກິດໂດຍບໍ່ມີທະບຽນວິສາຫະກິດ ແລະ ຕ້ອງດຳເນີນມາດຕະການ ຕາມ ທີ່ໄດ້ລະບຸໄວ້ໃນ ມາດຕາ 236 ຂອງກົດໝາຍວ່າດ້ວຍວິສາຫະກິດຢ່າງເຂັ້ມງວດ.
8. ພາກສ່ວນເຈົ້າໜ້າທີ່ທະບຽນວິສາຫະກິດຂອງທຸກທ້ອງຖິ່ນ ມີສິດສັ່ງໂຈະການດຳເນີນທຸລະກິດຊົ່ວຄາວ ຫຼື ຖາວອນ ຕໍ່ກິດຈະການ ຫລື ປະເພດທຸລະກິດຂອງວິສາຫະກິດ ທີ່ມີການລະເມີດ ລະບຽບ ກົດໝາຍ ໃນຂອບເຂດພື້ນທີ່ຮັບຜິດຊອບຂອງຕົນ. ສ່ວນການຖອນທະບຽນວິສາຫະກິດ ຕ້ອງແມ່ນເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ຂຶ້ນທະບຽນໃຫ້ ເປັນຜູ້ລຶບຊື່ອອກຈາກບັນຊີທະບຽນວິສາຫະກິດ.
9. ໃນກໍລະນີ ການລະເມີດຂອງວິສາຫະກິດໃດໜຶ່ງ ຄວບຄຸມຂອບເຂດພື້ນທີ່ຄວາມຮັບຜິດຊອບຂອງຫຼາຍເມືອງ ຫລື ຫຼາຍແຂວງ ແມ່ນໃຫ້ພາກສ່ວນເຈົ້າໜ້າທີ່ທະບຽນວິສາຫະກິດ ປະສານງານກັນຢ່າງໃກ້ຊິດ ແນໃສ່ຮັບປະກັນຄວາມເປັນເອກະພາບ ແລະ ປະສິດທິພາບຂອງມາດຕະການທີ່ໃຊ້ ທັງເປັນການສົ່ງເສີມການດຳເນີນທຸລະກິດໃຫ້ຖືກຕ້ອງຕາມລະບຽບ ກົດໝາຍ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ;**

ດຣ. ນາມ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກອຸດສາຫະກຳ ແລະ ການຄ້າ

ແຂວງ................................

ເລກທີ________/ພອຄ

ທີ່.....................,ວັນທີ______

**ຄຳເຕືອນ**

**ສຳລັບການປະຕິບັດພາຍຫຼັງຂຶ້ນທະບຽນວິສາຫະກິດ**

ຫລັງຈາກໄດ້ຮັບໃບທະບຽນວິສາຫະກິດແລ້ວ, ວິສາຫະກິດທີ່ກ່ຽວຂ້ອງຕ້ອງປະຕິບັດດັ່ງນີ້ :

1. ເຄື່ອນໄຫວທຸລະກິດ ສອດຄ່ອງກັບຂັ້ນຕອນ, ເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງຢ່າງເຂັ້ມງວດ;

2. ການເຄື່ອນໄຫວທຸລະກິດ ຢູ່ແຂວງ ຫຼື ເມືອງໃດ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງ, ຕິດຕາມ,ກວດກາ ໂດຍກົງຂອງຂະແໜງການທີ່ກ່ຽວຂ້ອງ ຂອງແຂວງ, ນະຄອນຫລວງ ຫຼື ເມືອງ ນັ້ນ;

3. ເຄື່ອນໄຫວທຸລະກິດ ພາຍໃນກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງກົດໝາຍວິສາຫະກິດ;

4. ສຳລັບຜູ້ລົງທຶນຕ່າງປະເທດ ຫລັງຈາກຂຶ້ນທະບຽນວິສາຫະກິດແລ້ວ ຕ້ອງນຳທຶນເຂົ້າມາ ສປປ ລາວ ໃນອັດຕາສ່ວນຢ່າງຫນ້ອຍບໍ່ໃຫ້ຫຼຸດຕາມທີ່ໄດ້ບົ່ງໄວ້ໃນມາດຕາ 4 ຂອງດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ. ການຖອກທຶນຈົດທະບຽນຂອງວິສາຫະກິດທີ່ລົງທຶນ ໃນຫຼາຍຂະແໜງການແມ່ນໃຫ້ຖອກຕາມອັດຕາສ່ວນຂອງຂະແໜງການທີ່ກຳນົດໄວ້ສູງສຸດ;

5. ຫ້າມມອບຊື່ ຫລື ໃບທະບຽນວິສາຫະກິດ ໃຫ້ບຸກຄົນອື່ນນຳໃຊ້ ໂດຍບໍ່ຖືກຕ້ອງຕາມບົດບັນຍັດຂອງມາດຕາ 23 ແລະ 24 ຂອງກົດໝາຍວ່າດ້ວຍວິສາຫະກິດ;

6. ຕ້ອງໄປເອົາໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ, ປະຕິບັດພັນທະພາສີ-ອາກອນ, ຈັດຕັ້ງປະຕິບັດການຖືບັນຊີຕາມມາດຕະຖານ ແລະ ສະຫຼຸບລາຍງານຜົນຂອງການດຳເນີນທຸລະກິດ ສົ່ງໃຫ້ຂະແໜງສ່ວຍສາອາກອນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;

7. ຕ້ອງຂຶ້ນປ້າຍວິສາຫະກິດ ຕາມລະບຽບກົດໝາຍ.

ວິສາຫະກິດ: ........................................................................................................

ໄດ້ອ່ານ, ຮັບຮູ້ ແລະ ເຂົ້າໃຈ ເປັນຢ່າງດີ ຕໍ່ຄຳເຕືອນສຳລັບການປະຕິບັດພາຍຫຼັງຂຶ້ນທະບຽນວິສາຫະກິດ. ໃນກໍລະນີລະເມີດຄຳເຕືອນດັ່ງກ່າວມາຂ້າງເທິງນີ້ ວິສາຫະກິດຂອງພວກຂ້າພະເຈົ້າຈະຮັບຜິດຊອບ ແລະ ຍອມຮັບມາດຕະການຕ່າງໆຕາມລະບຽບກົດໝາຍ ໂດຍສະເພາະແມ່ນມາດຕະການຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍວ່າດ້ວຍສ່ວຍສາອາກອນ.

ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ

ເຈົ້າຂອງ( ) ຫຼື ຜູ້ຕາງໜ້າວິສາຫະກິດ( ) ທ. ຫຼື ນ.........................

ລາຍເຊັນ.......................... ເລກໂທລະສັບ: ..........................